ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ

ກະຊວງການເງິນ

ເລກທີ 2315 / ກງ

ນະຄອນຫຼວງວຽງຈັນ, ວັນທີ 19 DEC 2003

# ຄຳສັ່ງເພີ້ມເຕີມ

## ຂອງລັດຖະມົນຕີວ່າການກະຊວງການເງິນ

## ວ່າດ້ວຍການສືບຕໍ່ປັບປຸງວຽກງານຫວຍພັດທະນາ

- ອີງຕາມມະຕິຕົກລົງ ຂອງສະພາລັດຖະມົນຕີ ສະບັບເລກທີ 347/ປສລ, ລົງວັນທີ 14/12/1982 ກ່ຽວກັບການພິມ-ຈຳໜ່າຍໃບຫວຍພັດທະນາທຸກປະເພດ.

- ອີງຕາມດຳລັດ ຂອງນາຍົກລັດຖະມົນຕີ ສະບັບເລກທີ 127/ນຍ, ລົງວັນທີ 03/10/2000 ວ່າດ້ວຍການ ຈັດຕັ້ງ ແລະການເຄື່ອນໄຫວ ຂອງກະຊວງການເງິນ.

- ອີງຕາມຄຳສັ່ງ ຂອງທ່ານຮອງນາຍົກລັດຖະມົນຕີ, ລັດຖະມົນຕີວ່າການກະຊວງການເງິນ ສະບັບເລກທີ 1842/ກງ, ລົງວັນທີ 28/10/2000 ໃຫ້ຫັນເອົາການທຸລະກິດ ຫວຍພັດທະນາມາຂຶ້ນກັບການຄຸ້ມຄອງໂດຍກົງ ຂອງລັດ ຂັ້ນແຂວງ ແລະເມືອງ.

- ອີງຕາມແຈ້ງການ ຂອງຫ້ອງວ່າການ ສຳນັກງານນາຍົກລັດຖະມົນຕີ ສະບັບເລກທີ 1547/ນຍ, ລົງວັນທີ 6/11/2003 ວ່າດ້ວຍການເຄື່ອນໄຫວວຽກງານຫວຍພັດທະນາ.

### ລັດຖະມົນຕີວ່າການກະຊວງການເງິນ ອອກຄຳສັ່ງເພີ້ມເຕີມດັ່ງນີ້:

1/. ໃຫ້ລັດວິສາຫະກິດ ຫວຍພັດທະນາ ສືບຕໍ່ປັບປຸງສາຂາຫວຍພັດທະນາ ໃຫ້ເຄື່ອນໄຫວທຸລະກິດຢ່າງຂາດຕົວ.

2/. ໃຫ້ພະແນກການເງິນແຂວງ, ນະຄອນຫລວງວຽງຈັນ ແລະ ເຂດພິເສດ ປັບປຸງກົງຈັກການຈັດຕັ້ງຫວຍພັດທະນາໂດຍແຍກ ພາລະບົດບາດ ລະຫວ່າງ ບໍລິຫານ ກັບ ທຸລະກິດໃຫ້ຂາດຕົວ ເປັນສາຂາຈຳ ໜ່າຍ ຂຶ້ນກັບລັດວິສາຫະກິດ ຫວຍພັດທະນາ ໂດຍກົງ ເພື່ອເຄື່ອນ ໄຫວຈຳໜ່າຍໃບຫວຍພັດທະນາທຸກປະເພດ ໂດຍ ການມີສ່ວນຮ່ວມຂອງທຸກພາກສ່ວນເສດຖະກິດຕາມເງື່ອນໄຂຕົວຈິງ ແລະ ຖືກກັບລະບຽບ-ກົດ ໝາຍ .

3/. ລັດວິສາຫະກິດ ຫວຍພັດທະນາມີໜ້າທີ່ພິມ-ຈຳໜ່າຍໃບຫວຍພັດທະນາທຸກປະເພດ,ຂາຍຍົກໃຫ້ບັນດາສາຂາຫວຍພັດທະນາ ຢູ່ທ້ອງຖິ່ນໄປຈຳໜ່າຍຕາມລະບຽບການ .

4/. ມອບໃຫ້ຄະນະຮັບຜິດຊອບກ່ຽວກັບການຫັນເອົາທຸລະກິດ ຫວຍພັດທະນາ ທີ່ຖືກແຕ່ງຕັ້ງ ສະບັບເລກທີ 1159/ກງ, ລົງວັນທີ 10/06/2002 ສືບຕໍ່ຈັດຕັ້ງປະ ຕິບັດຄຳສັ່ງເພີ້ມເຕີມສະບັບນີ້ໃຫ້ສຳເລັດໃນປີ 2004 ແລ້ວສະຫລຸບລາຍງານໃຫ້ຄະນະນຳກະຊວງການເງິນ.

5/. ຄຳສັ່ງສະບັບນີ້ ມີຜົນສັກສິດໃຊ້ເປັນທາງການໄດ້ນັບແຕ່ມື້ລົງລາຍເຊັນນີ້ເປັນຕົ້ນໄປ.

ລັດຖະມົນຕີວ່າການກະຊວງ ການເງິນ,

ກະຊວງການເງິນ ລັດຖະມົນຕີ

ສົມສະຫວາດ ... ໃພສີລາ